





# ວີລະຊົນ ສີທອງ



# ສີທອງ

## ວິລະຊົນແຫ່ງຊາດ

ຈາລຶກໄວ້ໃນປຶ້ມຄຳ

ປະຫວັດສາດຂອງຊາດລາວ

# ວິລະຊຶນສິທອງ

ສະຫງວນລິຂະສິດ 2010

## ຄະນະຊີ້ນຳເນື້ອໃນ

ກົມວິທະຍາສາດ-ປະຫວັດສາດການທະຫານ
ກະຊວງປ້ອງກັນປະເທດ
ຄະນະພັກ, ຄະນະບັນຊາ, ສະພາວິທະຍາສາດ-ປະຫວັດສາດການທະຫານ
ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ
ສະມາຄົມນັກປະພັນລາວ

## ຄະນະທີ່ປຶກສາ ໃຫ້ຂໍ້ມູນ

ທ່ານ ພົນຕີ ຊຽງສົມ ກຸນລະວົງ ວິລະຊົນແຫ່ງຊາດ
ອະດີດກຳມະການສູນກາງພັກ ລັດຖະມົນຕີຊ່ວຍວ່າການ
ກະຊວງປ້ອງກັນຄວາມສະຫງົບ, ພະນັກງານບຳນານ.

ທ່ານ ພົນຈັດຕະວາ ຄຳຫອມ ແສງບົວລົມ ວິລະຊົນແຫ່ງຊາດ
ຄະນະປະຈຳພັກ ນະຄອນຫຼວງວຽງຈັນ, ເລຂາຄະນະພັກ,
ຫົວໜ້າກອງບັນຊາການທະຫານນະຄອນຫຼວງວຽງຈັນ

ທ່ານ ພັນເອກ ຄຳພັດ ເພີບບຸດາ
ສະມາຊິກສະພາແຫ່ງຊາດ ເຂດ I ນະຄອນຫຼວງວຽງຈັນ
ຄະນະພັກ-ຄະນະກອງບັນຊາການ, ຫົວໜ້າຫ້ອງພະລາທິການ
ທະຫານນະຄອນຫຼວງວຽງຈັນ

ທ່ານ ພັນໂທ ບູນເພັງ ສິດທິສັກ
ຮອງເລຂາ ຄະນະພັກ-ຄະນະກອງບັນຊາການ, ຫົວໜ້າຫ້ອງການເມືອງ
ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ

ທ່ານ ຈານແອດ ທອງດາລາ
ອະດີດພະນັກງານ ກໍ່ສ້າງຮາກຖານການເມືອງ,
ກອງຫຼອນເຂດ ລອງສັງ-ລອງຕອນ ພະນັກງານບຳນານ
ພ້ອມນັ້ນຍັງໄດ້ຮັບການຮ່ວມມືຈາກຄະນະປະຈຳພັກເມືອງສັງທອງ,
ນາງປະທຸມມາ ອະດີດພັນລະຍາ ຂອງສະຫາຍສີທອງ, ທ່ານ ກອງສີ
ນ້ອງຊາຍຂອງ ສະຫາຍ ສີທອງ, ທ່ານ ຫຼ້າວັນສີ ອະດີດນັກຮົບກອງພັນ 601

ທ່ານ ພັນເອກ ສີບູນ ຄູນທອງບາງ
ທ່ານ ຮ້ອຍເອກ ຄຳໃສ ອະດີດພະນັກງານກອງຮ້ອຍ 4 ກອງພັນ 500
ທີ່ເຄື່ອນໄຫວຢູ່ເຂດ ລອງສັງ-ລອງຕອນ
ພະນັກງານບຳນານ ພ້ອມດ້ວຍປະຊາຊົນ ຊາວເມືອງສັງທອງ
ນະຄອນຫຼວງວຽງຈັນ

## ຮັບໂຮມ ແລະ ເກັບກຳຂໍ້ມູນເພີ່ມເຕີມ

ນາງ ພິວລາວັນ ຫຼວງວັນນາ
ວ່າການປະທານສະມາຄົມ ນັກປະພັນລາວ
ສົມສຸກ ສຸກສະຫວັດ
ຮອງປະທານສະມາຄົມ ນັກປະພັນລາວ

ພັນໂທ ສົມນຶກ ລໍວິໄຊ
ຫົວໜ້າພະແນກວິທະຍາສາດ-ປະຫວັດສາດ
ການທະຫານກອງບັນຊາການທະຫານ ນະຄອນຫຼວງວຽງຈັນ

ຮ້ອຍໂທ ຄຳແພງ ມະນີວົງ
ຊ່ວຍວຽກພະແນກວິທະຍາສາດ-ປະຫວັດສາດການທະຫານ
ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ

### ຂຽນໂດຍ

ຮ້ອຍໂທ ຄຳແພງ ມະນີວົງ

### ຮຽບຮຽງໂດຍ

ສົມສຸກ ສຸກສະຫວັດ
ສຸຂີ ບໍລະສິລປ໌
ພັນໂທ ສົມນຶກ ລໍວິໄຊ
ຮ້ອຍໂທ ຄຳແພງ ມະນີວົງ

### ຄອມພິວເຕີ

ຮ້ອຍໂທ ຄຳແພງ ມະນີວົງ

### ອອກແບບປົກ ແລະ ຈັດໜ້າ

ນິວັດ ຊຸນພິທັກ



# ຄໍາເຫັນ

ທ່ານ ພົນຈັດຕະວາ ຄໍາທອນ ແສງບົວລົມ ວິລະຊົນແຫ່ງຊາດ ຄະນະປະຈໍາພັກ ນະຄອນຫຼວງວຽງຈັນ, ເລຂາຄະນະພັກ ຫົວໜ້າກອງບັນຊາການທະຫານ ນະຄອນຫຼວງວຽງຈັນ.

ເນື່ອງໃນໂອກາດຂໍ່ານັບ ຮັບຕ້ອນ ງານສະເຫຼີມສະຫຼອງວຽງຈັນ ເປັນນະຄອນຫຼວງ ຄົບຮອບ 450 ປີ(1560-2010) ແລະວັນຄ້າຍວັນເກີດຂອງສະຫາຍ ສີທອງ ວິລະຊົນແຫ່ງຊາດ ອະດີດຫົວໜ້າກອງພັນ 500 ກອງທັບປະຊາຊົນລາວ ຄົບຮອບ85ປີ.( 9/8/1925 - 9/8/ 2010 ).

ວຽງຈັນກາຍ ເປັນນະຄອນຫຼວງ ຂອງປະເທດລາວມາໄດ້ຫຼາຍ ເຊັ່ນຄົນແລ້ວ, ມີທັງໄລຍະຮຸ່ງເຮືອງເຫຼືອງເຫຼື້ອມ ແລະໄລຍະແຕກແຍກ, ແບ່ງສ່ວນ, ເສຍດິນແດນໃຫ້ແກ່ຊາດອື່ນ ແລະທັງກາຍເປັນເມືອງສ່ວຍເມືອງຂຶ້ນຂອງຕ່າງຊາດ. ປະຫວັດສາດໄດ້ບັນທຶກໄວ້ວ່າ ບັນດາບັນພະບຸດລຸດຜູ້ເກັ່ງກ້າ ພິລະອາດຫານຊານໄຊ ໃນການນໍາພາປະຊາຊົນລາວບັນດາເຜົ່າ ຕໍ່ສູ້ຍາດເອົາເອກະລາດ ໂດຍສະເພາະແມ່ນໄລຍະຕໍ່ສູ້ກັບຈັກກະພັດຝຣັ່ງ ແລະອາເມຣິກາຜູ້ຮຸກຮານ ເຊິ່ງເປັນໄລຍະຕໍ່ສູ້ຍືດເຍື້ອຍາວນານ ລະອິດລະອຽວ, ຫິວລ້ຽວຫິວຕໍ່, ທຸກຍາກລໍາບາກແຕ່ປະຊາຊົນລາວບັນດາເຜົ່າພາຍໃຕ້ການນໍາພາຂອງພັກຄອມມູນິດອິນດູຈີນໂດຍແມ່ນທ່ານປະທານໂຮຈິມິນເປັນຜູ້ສ້າງຕັ້ງ ຕໍ່ມາກາຍເປັນພັກແຮ້ວນລາວ ແລະເປັນພັກປະຊາຊົນປະຕິວັດລາວໂດຍແມ່ນ ທ່ານປະທານ ໄກສອນ ພົມວິຫານ ເປັນຜູ້ສ້າງຕັ້ງ ແລະນໍາພາ ຜ່ານຂະບວນວິວັດແຫ່ງການຕໍ່ສູ້ກູ້ຊາດ ອັນທໍລະຫົດອົດທົນ ຂອງປະຊາຊົນລາວບັນດາເຜົ່າໃນແຕ່ລະໄລຍະ.

ບັນດານັກຮົບປະຕິວັດທີ່ອົງອາດກ້າແກ່ນ ມີໄຫວພິບ ສະຫຼາດ ສ່ອງໃສທົນທານໜຽວແໜ້ນຕໍ່ສູ້ບໍ່ຍອມຈຳນົນ ຜ່ານການເຝິກຝົນຫຼໍ່ ຫຼອມແນວຄິດຈິດໃຈຂອງນັກປະຕິວັດ, ນ້ຳໃຈຮັກເຊື້ອແພງຊາດອັນດູດດື່ມ ໃນປີ 1949 ສະຫາຍ ສີທອງ ໄດ້ຈາກບ້ານເກີດເມືອງນອນ, ພໍ່ແມ່ຍາດຕິພີ່ນ້ອງອັນແສນຮັກຂອງຕົນ ເຂົ້າເຮັດການປະຕິວັດ ຢູ່ໃນກຳລັງປະກອບອາວຸດ ເຂດລ່ອງສັງ-ລ່ອງຕອນ.

ຕະຫຼອດໄລຍະເຄື່ອນໄຫວປະຕິວັດ ສະຫາຍ ສີທອງ ໄດ້ນຳເອົາຊີວິດອັນໜຸ່ມແໜ້ນຂອງຕົນ ປະກອບສ່ວນຕໍ່ສູ້ກັບຈັກກະພັດຜູ້ຮຸກຮານ ທັງສູ້ຮົບ, ທັງກໍ່ສ້າງຮາກຖານການເມືອງ, ທັງສຶກສາຮ່ຳຮຽນສິລະປະຍຸດຍຸດທະວິທີ ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ເຂົ້າໃນແປວໄຟປະຕິວັດ ຈາກລູກຊາວໄຮ່ ນາບ້ານປ່າຂາດອນຜູ້ໜຶ່ງ ກາຍເປັນຜູ້ບັນຊາກຳລັງປະກອບອາວຸດແຕ່ຂັ້ນຫົວໜ້າໝູ່ກ້າວຂຶ້ນເປັນຜູ້ບັນຊາກອງພັນທະຫານທ້ອງຖິ່ນແຂວງວຽງຈັນ, ບັນຊາກຳລັງເຄື່ອນໄຫວສູ້ຮົບຢ່າງເດັດດ່ຽວ ໜຽວແໜ້ນແລະພິລະອາດຫານ ຜົນງານ ແລະຄຸນງາມ ຄວາມດີຂອງສະຫາຍສີທອງໄດ້ຈັດຢູ່ແຖວໜ້າຂອງພະນັກງານ-ນັກຮົບໃນກຳລັງປະກອບອາວຸດປະຕິວັດ. ກອງປະຊຸມຄັດເລືອກຜົນງານໃນວັນທີ 15 - 20 ມັງກອນ 1956 ທີ່ບ້ານດ່ານ ເມືອງໂສຍ ແຂວງຫົວພັນ, ສູນກາງພັກໄດ້ມອບ ນາມະຍົດໃຫ້ສະຫາຍສີທອງເປັນນັກຮົບແຂ່ງຂັນແລະໄດ້ປະດັບຫຼຽນໄຊອິດສະລະຊັ້ນ I ໃຫ້ຢ່າງສົມກຽດ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປານາສາທາລະນະລັດ ປະຊາທິປະໄຕປະຊາຊົນລາວໃນ ວັນທີ 2 ທັນວາ 1975. ກອງປະຊຸມຄັດເລືອກຜົນງານ ໃນວັນທີ 5 / 04 / 1979 ທີ່ ນະຄອນຫຼວງວຽງຈັນ.ພັກ-ລັດຖະບານໄດ້ຕົກລົງມອບນາມະຍົດວິລະຊົນ ແຫ່ງຊາດ ໃຫ້ສະຫາຍ ສີທອງ ຢ່າງສົມກຽດ ສະຫາຍໄດ້ອຸທິດຊີວິດ ເລືອດເນື້ອ ເພື່ອດຳເນີນການຕໍ່ສູ້ປົດປ່ອຍຊາດ ສະຫາຍໄດ້ເສຍສະຫຼະ ຊີວິດ ໃນການສູ້ຮົບຈັ່ງທ່າສະກັດກັ້ນການບຸກໂຈມຕີຂອງສັດຕູຢູ່ຕົວເມືອງ ວຽງຈັນ.

ສະຫາຍໄດ້ເສຍສະຫຼະຊີວິດຢ່າງພິລະອາດຫານໃນວັນທີ 15 / 12 / 1960 ເຫຼືອໄວ້ແຕ່ຄຸນງາມຄວາມດີ, ຄຸນສົມບັດ ສິນທຳປະຕິວັດ, ນ້ຳໃຈເດັດດ່ຽວໜຽວແໜ້ນອົງອາດກ້າຫານຕໍ່ສູ້ບໍ່ຍອມຈຳນົນສັດຕູຈົນເຖິງ ຢອດເລືອດແລະລົມຫາຍໃຈວິນາທີສຸດທ້າຍຂອງສະຫາຍ.

ພວກເຮົາ ພະນັກງານ-ນັກຮົບ ໃນຖັນແຖວກຳລັງປະກອບອາວຸດ ປະຊາຊົນລາວ ພະນັກງານພັກ-ລັດ, ນັກຮຽນ-ນັກສຶກສາ ປັນຍາຊົນ ແລະ ປະຊາຊົນລາວບັນດາເຜົ່າຈົ່ງພ້ອມກັນຮ່ຳຮຽນເອົາຄຸນສົມບັດ ສິນທຳ ປະຕິວັດ ແລະຈາລຶກບູນຄຸນ, ຄຸນງາມຄວາມດີ ຂອງສະຫາຍ ສີທອງ ວິລະຊົນແຫ່ງຊາດໄວ້ຕະຫຼອດຊົ່ວກາລະນານ.

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2010

ທີ່ວໜ້າກອງບັນຊາການທະຫານນະຄອນຫຼວງວຽງຈັນ

# ຄຳນຳ

ປະເທດລາວ ເປັນປະເທດໜຶ່ງທີ່ເກົ່າແກ່ດຳລົງຄົງຕົວ ແລະຂະຫຍາຍຕົວ ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້ຂອງໂລກ. ນັບແຕ່ການປະກົດຕົວຂອງລັດລາວ ທີ່ກະແຈກກະຈາຍ ຜ່ານມາໃນອະດີດລ້ວນແຕ່ຖືກລົບກວນ ແລະຮຸກຮານຈາກອານາຈັກອື່ນໆທີ່ແຂງແຮງກວ່າ ຈົນເຖິງສະໄໝເຈົ້າຟ້າງຸ່ມ ມະຫາລາດທ້ອນໂຮມເອົາລັດລາວບູຮານ ຫຼືເມືອງລາວບູຮານທັງຫຼາຍ ເຂົ້າເປັນອານາຈັກລາວລ້ານຊ້າງເອກະພາບ ເວລາຕໍ່ມາອານາຈັກລາວລ້ານຊ້າງ ຈຶ່ງມີໂອກາດຟື້ນຕົວຂຶ້ນໃໝ່ແຕ່ຄ.ສ.1350. ເຈົ້າຟ້າງຸ່ມໄດ້ວາງຮາກຖານການປົກຄອງ ເສດຖະກິດ, ວັດທະນະທຳ-ສັງຄົມຕະຫຼອດເຖິງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໄວ້ຫຼາຍດ້ານ.

ນັບແຕ່ເສັ້ນທາງເດີນ ຂອງປະເທດຊາດນັ້ນ ໄດ້ເກີດມີຫຼາຍໄລຍະ ບາງໄລຍະກໍຮຸ່ງເຮືອງ ເຫຼືອງເຫຼື້ອມ ມີໄລຍະຄົນໃນຊາດ ກໍແຕກແຍກຂາດຄວາມສາມັກຄີກັນ ຍ້ອນກົນອຸບາຍແບ່ງແຍກ ເພື່ອປົກຄອງຂອງຜູ້ຮຸກຮານຈົນເຖິງຂັ້ນປະເທດຊາດກາຍເປັນປະເທດສະລາດ ເປັນເມືອງສວຍເມືອງຂຶ້ນຂອງຕ່າງປະເທດ ແຕ່ຍ້ອນການຕໍ່ສູ້ບໍ່ຍອມຈຳນົນຂອງ ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາ ຂອງບັນພະບຸລຸດຜູ້ເກັ່ງກ້າຈຶ່ງສາມາດກອບ ກູ້ເອົາປະເທດຊາດ ຄືນມາໄດ້

ກ່ອນນີ້ໜຶ່ງສະຕະວັດ ຂະບວນການຕໍ່ສູ້ກູ້ຊາດ ຂອງກຳລັງປະກອບອາວຸດປະຊາຊົນລາວບັນດາເຜົ່າ ເພື່ອຕ້ານການຮຸກຮານບຽດຍຶດຂອງພວກລ່າເມືອງຂຶ້ນຝຣັ່ງ ແລະຈັກກະພັດອາເມຣິກາ ເປັນຂະບວນດຸເດືອດກວ້າງຂວາງ ແຕ່ເໜືອເຖິງໃຕ້ທົ່ວປະເທດ ໃນນັ້ນພື້ນຖານກວ່າໝູ່ແມ່ນການຕໍ່ສູ້ ຂອງກອງທັບແລະຂອງປະຊາຊົນເຮົາ ເຮັດໃຫ້ປະຫວັດສາດຂອງການຕໍ່ສູ້ນັ້ນ ໄດ້ກາຍເປັນຕຳນານແຫ່ງຊີວິດຂອງບັນພະບຸລຸດວິລະກຳທີ່ໂດດເດັ່ນ ຂອງບັນດາເຫຼົ່ານັກຕໍ່ສູ້ທັງຫຼາຍຈົນເທົ່າທຸກວັນນີ້.

ເວົ້າສະເພາະ ໃນນະຄອນຫຼວງວຽງຈັນ ແລະແຂວງວຽງຈັນ ແມ່ນໜຶ່ງໃນຂະບວນການຕໍ່ສູ້ ທີ່ເອກອ້າງແລກດ້ວຍເລືອດເນື້ອເຫື່ອໄຄ ຂອງ ນັກຮົບປະຕິວັດ ເພື່ອປົກປັກຮັກສາຜືນແຜ່ນດິນ ຂອງປະເທດຊາດ, ເພື່ອອິດສະລະພາບ ຂອງປະຊາຊົນລາວບັນດາເຜົ່າ ໄດ້ໃຫ້ກຳເນີດບັນດາ **"ນັກຕໍ່ສູ້ກູ້ຊາດ"** ທີ່ໄດ້ສ້າງວິລະກຳປະຫວັດສາດ ດ້ວຍນ້ຳໃຈພິລະອາດຫານ ໄວ້ໃນດວງໃຈ ຂອງປະຊາຊົນລາວຕະຫຼອດມາ ນັ້ນກໍແມ່ນ **"ວິລະຊົນ ສີທອງ"** ນັກຮົບວິລະຊົນ ຂອງກອງທັບລາວອິດສະລະ ໃນເມື່ອກ່ອນ ແລະກອງທັບປະຊາຊົນລາວຜູ້ພິລະອາດຫານໃນປັດຈຸບັນ

ເພື່ອເຮັດໃຫ້ການຈາລຶກເຂົ້າໃນປຶ້ມຄຳປະຫວັດສາດຂອງຊາດ ແລະການທວນຄືນມູນເຊື້ອວິລະກຳ ຂອງນັກຮົບກູ້ຊາດໃນຖັນແຖວ ກອງທັບລາວອິດສະລະ ແລະການສືບສານຕຳນານ ວິລະກຳແນໃສ່ເພື່ອສຶກສາອົບຮົມຜົນງານຄຸນງາມຄວາມດີ ດັ່ງກ່າວຕໍ່ຄົນຮຸ່ນສືບທອດເຮັດໃຫ້ພາລະກິດຂອງ ສະຫາຍ ຍືນຍົງຢູ່ໃນດວງໃຈຂອງຊາວນະຄອນຫຼວງວຽງຈັນກໍຄືປະຊາຊົນລາວບັນດາເຜົ່າ.

ພະແນກວິທະຍາສາດ - ປະຫວັດສາດ ການທະຫານກອງບັນຊາການທະຫານນະຄອນຫຼວງວຽງຈັນ ສົມທົບກັບສະມາຄົມ ນັກປະພັນລາວ ຈຶ່ງໄດ້ຄົ້ນຄວ້າຮຽບຮຽງ ປະຫວັດສາດມູນເຊື້ອ ການຕໍ່ສູ້ເດັດດ່ຽວ,ໝຽວແໜ້ນ, ອົງອາດກ້າຫານ, ຄຽດແຄ້ນບໍ່ຍອມຈຳນົນຂອງສະຫາຍ ສີທອງ ວິລະຊົນແຫ່ງຊາດໄວ້ໃນປຶ້ມເຫຼັ້ມນີ້.

ສະຫາຍ ສີທອງ ເປັນແບບຢ່າງແຫ່ງການເສຍສະຫຼະອັນສູງສົ່ງເພື່ອຊາດ ເພື່ອປະຊາຊົນລາວບັນດາເຜົ່າ ອີກປະການໜຶ່ງກໍເພື່ອສະດຸດີວິລະກຳຂອງສະຫາຍທີ່ໄດ້ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ ປົກປັກຮັກສານະຄອນຫຼວງວຽງຈັນ ເຊິ່ງສະຫາຍກໍແມ່ນຜູ້ໜຶ່ງທີ່ໄດ້ສະຫຼະຊີບເພື່ອຊາວນະຄອນຫຼວງວວຽງຈັນ ຢ່າງອາດຫານ ຊານໄຊ ຊຶ່ງໃນທ້າຍປີ 2010 ນີ້ ຈະມີການສະເຫຼີມສະຫຼອງວຽງຈັນ 450 ປີ ຢ່າງຍິ່ງໃຫຍ່ອະລັງການ

ເຖິງວ່າການຮຽບຮຽງ ເກັບກຳຂໍ້ມູນຜົນງານນັ້ນໄດ້ສຳເລັດແລ້ວ ກໍຕາມແຕ່ບັນດາຂໍ້ຂາດຕົກບົກຜ່ອງກໍຍັງມີຢູ່ ຄວາມສາມາດຂອງການເກັບກຳຂໍ້ມູນອາດຈະຍັງບໍ່ທັນຕອບສະໜອງໄດ້ລະອຽດໝົດທຸກແງ່ມູມ ດັ່ງນັ້ນຄະນະຄົ້ນຄວ້າຮຽບຮຽງປະຫວັດສາດມູນເຊື້ອ ຂອງກອງບັນຊາການທະຫານນະຄອນຫຼວງວຽງຈັນ ຖືໂອກາດນີ້ ຂໍອະໄພໃນສ່ວນທີ່ບໍ່ທັນຍົກຂຶ້ນມາເວົ້າໝົດ ແລະຂໍສະແດງຄວາມຮູ້ບຸນຄຸນ ຕໍ່ພະນັກງານປະຕິວັດ ອາວຸໂສ ພໍ່ແມ່ພີ່ນ້ອງຊາວເມືອງສັງທອງ ທຸກຖ້ວນໜ້າທີ່ມີສ່ວນຮ່ວມສະໜອງຂໍ້ມູນລັບຈຳເປັນ ໃຫ້ແກ່ພວກເຮົາ ຫວັງຢ່າງຍິ່ງວ່າຈະໄດ້ຮັບຄຳຕຳນິຕິຊົມ ແລະພ້ອມກັນຊອກຂໍ້ມູນໃໝ່ໃນການປັບປຸງຮຽບຮຽງຄັ້ງຕໍ່ໆໄປ ໃຫ້ມີເນື້ອໃນອຸດົມສົມບູນຂຶ້ນ.

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2010
ຄະນະຄົ້ນຄວ້າຮຽບຮຽງປະຫວັດສາດມູນເຊື້ອ
ທະຫານນະຄອງຫຼວງວຽງຈັນ

## ສາລະບັນ ໜ້າ

**ຕອນທີ I**

ການກຳເນີດ, ໄວເຍົາ, ການເຕີບໃຫຍ່
ແລະການກ້າວເຂົ້າສູ່ເສັ້ນທາງ ທີ່ສະຫວ່າງສະໄຫວ 14

1. ສະພາບຈຸດພິເສດຂອງເຂດລ່ອງສັງ-ລ່ອງຕອນ 14
2. ຊີວິດເມື່ອໄວເຍົາ 17

**ຕອນທີ II**

ຊີວິດ ການນຳພາຂະບວນຕໍ່ສູ້ປະຕິວັດ ການປະເຊີນໜ້າ
ກັບສັດຕູຂອງ ສະຫາຍ ສີທອງ ຕ້ານການຮຸກຮານຂອງ
ພວກລ່າເມືອງຂຶ້ນຝຣັ່ງ (1945 - 1954 ) 22

1.ກອງຟ້າງຸ່ມ ກອງທັບລາວອິດສະລະ 22
2. ການຕໍ່ສູ້ປະຕິວັດທີ່ບໍ່ຍອມຈຳນົນ 35
3. ຊີວິດໃນຄຸກ ແລະການໂຕນຄຸກ 44
4. ນາມະຍົດ ນັກຮົບແຂງຂັນ 48
5. ການລວມລາວຄັ້ງທີ 1 58
3. ນຳຫາຄອບຄົວ 64

**ຕອນທີ III**

ການປະເຊີນໜ້າຍ່າງພິລະອາດຫານໃນໂຕະເຈລະຈາ
ທາງການເມືອງ ແລະການຕໍ່ສູ້ກາງສະໜາມຮົບຕ້ານ
ການຮຸກຮານຂອງຈັກກະພັດອາເມຣິກາ(1954 -1960) 69

# ສາລະບັນ ໜ້າ

I. ສະພາບການໂຮມລາວມີການຜັນແປ 69

II. ຊ່ວຍໜູນ, ປ້ອງກັນລັດຖະບານປະສົມແລະສະໜັບສະໜູນການລັດຖະປະຫານ ( 09/08/1960 ) 73

ບັນຕິພູຕະເກີຍ 79

1.ດ້ານການທະຫານ 80

2. ດ້ານການເມືອງ ແລະພະລາທິການ 80

III. ກອງພັນ 500 ສະມໍລະພູມເລືອດ 87

ສາຍເລືອດລູກລາວ 98

ຄຳຂວັນປະຈຳເມືອງ ເມືອງສັງທອງ 99

ຕອນທີ IV

ບາງບົດຮຽນ ແລະແບບຢ່າງຂອງ ສະຫາຍ ສີທອງ ວີລະຊົນແຫ່ງຊາດ 100

ສະຫຼຸບ 102

# ຕອນທີ I

# ການກຳເນີດ, ໄວເຍົາ, ການເຕີບໃຫຍ່ ການກ້າວສູ່ເສັ້ນທາງທີ່ສະຫວ່າງສະໄຫວ

## 1. ສະພາບຈຸດພິເສດຂອງເຂດ ລອງສັງ-ລອງຕອນ

ສາຍພູພະບັງຕັ້ງຍາວຢຽດແຕ່ແຄມນ້ຳຂອງໃນເຂດແດນ ເມືອງສີໂຄດຕະບອງ, ເມືອງ ສັງທອງ ແລ້ວຜ່ານເລີກເຂົ້າສູ່ແດນ ນາຊາຍທອງ, ໂພນໂຮງ ແລະເມືອງຫີນເຫີບ ເຊື່ອມຕໍ່ພູມີດ ຫຼຸງວໄປທິດຕາເວັນອອກ ເຫັນສັນພູເຂົາຄວາຍ ທີ່ຖືກເຊື່ອງໄວ້ໃນຫຼືບເມກ ສະສົມຄວາມອຸດົມສົມບູນຂອງທຳມະຊາດເຊັ່ນ:ສາຍນ້ຳໃສ,ປ່າໄມ້ຂຽວສົດງົດງາມຕະຫຼອດເຖິງຊີວະນາໆພັນ ເພື່ອການດຳລົງຊີວິດ ຂອງຊາວບ້ານໃນເຂດນີ້ ໄດ້ຊົມໃຊ້ທຳມາຫາກິນ.ສາຍນ້ຳຫຼາຍສາຍທີ່ເປັນສາຂາ ຂອງແມ່ນ້ຳຂອງໄດ້ຫຼັ່ງອອກມາຈາກຫ້ວຍຮ່ອງຕ່າງໆຂອງພູເຂົາຄວາຍ, ພູພະບັງ,ນ້ຳສັງນ້ຳຕອນແລະອື່ນໆ. ສາຍພູພະບັງ ທີ່ແສນອຸດົມສົມບູນ ກໍ່ຍັງມີສັດປ່ານາໆພັນອາໄສຢູ່ເຊັ່ນ: ຊ້າງ, ເສືອ, ສິງ,ກະທິງ,ແຮດ, ກວາງ, ຟານ, ລີງ, ຂາງ, ທະນີ, ໝູປ່າ ແລະ ອື່ນໆ.

ບັນພະບູລຸດຮຸ່ນກ່ອນ ໄດ້ຕໍ່ສູ້ເພື່ອປົກປັກຮັກສາເຂດນ້ຳແດນດິນ ແລະ ຄວາມອຸດົມສົມບູນຂອງຊັບພະຍາກອນ ໄວ້ເພື່ອລູກລາວຫຼານລາວ ຄັ້ງແລ້ວຄັ້ງເລົ່າກໍ່ຕາມ, ແຕ່ຄວາມໃຈດຳອຳມະຫິດຂອງສັກດີນາປະເທດໃກ້ຄຽງພວກລ່າເມືອງຂຶ້ນຈັກກະພັດຕ່າງດ້າວ ໄດ້ໃຊ້ກົນອຸບາຍຮ້ອຍແປດພັນປະການ ຫວັງແບ່ງແຍກພາຍໃນ ໃຫ້ແຕກຄວາມສາມັກຄີ ແລ້ວກ້າວເຂົ້າສູ່ການຄອບຄອງ ບຸກຍຶດເອົາໄປເປັນປະເທດສະລາດ ເມືອງສ່ວຍ, ເມືອງຂຶ້ນແບບເກົ່າ ແລະໃໝ່ບັງຄັບຂົ່ມເຫັງກົດຂີ່ ຂູດຮີດປະຊາຊົນລາວໃຫ້ເປັນທາດອອກແຮງງານ,ທາດກະສິກອນ ເສຍສ່ວຍພາສີອາກອນ

ໃນອັດຕາທີ່ແພງ ອີກດ້ານໜຶ່ງກໍ່ປຸ້ນສະດົມຊັບພະຍາກອນທຳມະຊາດຂອງປະເທດເຮົາໄປຢ່າງມະຫາສານ ພວກເຂົາໄດ້ບັງຄັບຂູ່ເຂັນເກັບເກນຜູ້ຄົນໄປເປັນທາດຮັບໃຊ້ຈຸດປະສົງຕ່າງໆເຊັ່ນ: ບັງຄັບຂູ່ເຂັນຜູ້ຍິງໃຫ້ກາຍເປັນທາດອາລົມອັນບ້າບໍ່ຂອງພວກເຂົາ. ຕໍ່ຜູ້ບໍ່ເຫັນດີ, ເຫັນພ້ອມໃນການກະທຳກໍ່ຖືກທາລຸນນະກຳປາບປາມຢ່າງໄຮ້ມະນຸດສະທຳ. ປະຊາຊົນລາວເວລານັ້ນຈຶ່ງຕີລາຄາ ອຳນາດການປົກຄອງສະໄໝນັ້ນວ່າເປັນໄມ້ມືຂອງພວກລ່າເມືອງຂຶ້ນພວກຮຸກຮານຕ່າງຊາດຊຶ່ງມີສິດອຳນາດໃນຖານເຈົ້ານາຍທຸ່ນ ແຕ່ທາດແທ້ແລ້ວແມ່ນການມອບກາຍຖະຫວາຍຕົວເປັນຂ້ອຍຂ້າຈົ່ງຮັກພັກດີຕໍ່ນາຍເໜືອຫົວຕ່າງປະເທດ.

ນ້ຳສັງ-ນ້ຳຕອນ ເປັນສາຍນ້ຳທີ່ຍາວໄກ ມີຕົ້ນກຳເນີດຢູ່ສາຍພູແຖບສາມໝື່ນເມືອງເຟືອງ ໄຫຼລ່ອງຜ່ານທົ່ງນາພູຜາປ່າດົງ, ຕາດແກ້ງເຫວຊັນ ແລ້ວປ່ອງລົງສູ່ນ້ຳຂອງ ສ້າງອະລິຍະທຳ ແຫ່ງສາຍພົວພັນແກ່ຜູ້ຄົນໃນໝູ່ບ້ານເຂດນີ້ ທັງເປັນສາຍນ້ຳທີ່ຫຼໍ່ລ້ຽງຊີວິດການເປັນຢູ່ປູກຝັງ, ລ້ຽງສັດ ຂອງປະຊາຊົນ.

ບ້ານນາຫອຍປັງ ເປັນບ້ານນ້ອຍແຫ່ງໜຶ່ງ ສ້າງຕັ້ງກ່ອນໜ້ານີ້ຫຼາຍເຊັ່ນຄົນໂດຍຕັ້ງຢູ່ເຂດຕາແສງນ້ຳຕອນ ເມືອງນາຊາຍທອງແຂວງວຽງຈັນປັດຈຸບັນແມ່ນເມືອງສັງທອງນະຄອນຫຼວງວຽງຈັນ ຫ່າງຈາກໃຈກາງນະຄອນຫຼວງປະມານ 74 ກິໂລແມັດ.ບ້ານດັ່ງກ່າວຕັ້ງຢູ່ຕີນພູພະບັງທີ່ປົກຄຸມດ້ວຍປ່າດົງວົງກົດຕຶບໜາ ມີປະຊາຊົນອາໄສຢູ່ (ເວລານັ້ນ)30 ກ່ວາຫຼັງຄາເຮືອນພົນລະເມືອງມີ 150 ຄົນ ເຊິ່ງທຳມາຫາກິນ ດ້ວຍການລ້ຽງສັດ-ປູກຝັງຕາມຮອຍບັນພະບູລຸດ ທີ່ເຄີຍເຮັດມາແຕ່ບູຮານະການເຮັດໃຫ້ຊີວິດການເປັນຢູ່ຂອງຜູ້ຄົນດຳເນີນໄປເປັນປົກກະຕິເພິ່ງຕົນເອງກຸ້ມຕົນເອງ ນອກຈາກນີ້ພືດຜົນຕ່າງໆທາງກະສິກຳ ທີ່ຊາວບ້ານຜະລິດໄດ້ ບວກກັບເຄື່ອງປ່າຂອງດົງ ທີ່ອຸດົມສົມບູນ ຍັງຖືກສົ່ງໄປຂາຍຢູ່ຕົວເມືອງ ວຽງຈັນເພື່ອເປັນສິນຄ້າຫຼືແລກປ່ຽນເອົາວັດຖຸສິ່ງຂອງຕ່າງໆມາຮັບໃຊ້ແກ້ໄຂຊີວິດປະຈຳວັນ. ປະຊາຊົນບ້ານນີ້ຍັງເອົາໃຈໃສ່ຮັກສາ ວັດທະນະທຳ ຮີດຄອງປະເພນີ ອັນດີງາມຂອງລາວເຮົາໄວ້ສືບຕໍ່ກັນມາ.

ໃນການດໍາລົງຊີວິດປະຈໍາວັນ ຂອງຊາວບ້ານ ຕາມທໍາມະຊາດ ບ້ານປ່າຊາດອນ. ໃນສາຍຕາຜູ້ຄົນທີ່ເຫັນວ່າ ມີຄວາມສະຫງົບສັນຕິນັ້ນ ຊໍ້າພັດແຝງໄວ້ຄວາມບໍ່ໄວ້ໃຈຕໍ່ສະພາບການບ້ານເມືອງ. ອໍານາດການປົກຄອງໃນຕົວເມືອງຍັງຄົງບັງຄັບຂູ່ເຂັນປາບປາມຊາວບ້ານຜູ້ທີ່ບໍ່ເຫັນດີເຫັນພ້ອມນໍາພວກລ່າເມືອງຂຶ້ນຝຣັ່ງ ດ້ວຍທ່າທີທີ່ຫຍາບຄາຍ ແລະ ເປັນອັນຕະລາຍຕໍ່ຊີວິດ. ການອອກໄປທໍາມາຫາກິນ ປະຈໍາວັນຕ້ອງໃຊ້ຄວາມລະມັດລະວັງຫຼາຍຂຶ້ນ.ພ້ອມກັນນັ້ນກໍ່ມີການເຄື່ອນໄຫວຕໍ່ສູ້ປະຕິວັດປິດລັບຢູ່ເບື້ອງຫຼັງທ່າມກາງປ່າດົງໝາຕຶບໃນເຂດລ່ອງສັງ-ລ່ອງຕອນ.

ກ້າວເຂົ້າສູ່ປີ 1945 ສະພາບການຂອງໂລກໄດ້ມີການຜັນແປໄປຢ່າງສັບສົນ ສິ່ງຜົນສະທ້ອນໂດຍກົງຕໍ່ຊາຕາກໍາ ຂອງບັນດາປະຊາຊາດໃນອິນດູຈີນ.ພວກຊຸນເສິກຍີ່ປຸ່ນ,ພວກລ່າເມືອງຂຶ້ນຝຣັ່ງໄດ້ຜັດປ່ຽນກັນຂຶ້ນກໍາອໍານາດ ເພື່ອດໍາເນີນການປາບປາມ ແລະກົດຂີ່ຂົ່ມເຫັງປະຊາຊົນລາວຢ່າງປ່າເຖື່ອນ.ພາຍຫຼັງສົງຄາມໂລກຄັ້ງທີສອງສິ້ນສຸດລົງ ພວກລ່າເມືອງຂຶ້ນຝຣັ່ງໄດ້ກັບມາຮຸກຮານປະເທດລາວ,ຫວຽດນາມ ແລະກໍາປູເຈຍອີກຄັ້ງ ຕໍ່ໜ້າສະພາບການດັ່ງກ່າວພັກກອມມູນິດອິນດູຈີນ ໄດ້ຊີ້ນໍາບັນດາກໍາລັງຕໍ່ຕ້ານໃຫ້ຖອຍກໍາລັງອອກຈາກຕົວເມືອງຕ່າງໆໄປສູ່ຊົນນະບົດຂຶ້ນໄປຫາເຂດພູດອຍ ຫ່າງໄກສອກຫຼີກ ເພື່ອກໍ່ສ້າງຮາກຖານການເມືອງຖານທີ່ໝັ້ນ ຂະຫຍາຍກໍາລັງເພື່ອດໍາເນີນການຕໍ່ສູ້ ຕາມແນວທາງ **"ຕໍ່ຕ້ານຍືດເຍື້ອຍາວນານ"** ຢູ່ເຂດຕ່າງໆ ກໍໃຫ້ມີການຈັດຕັ້ງຄະນະກໍາມະການຕໍ່ຕ້ານຝຣັ່ງຂຶ້ນຢ່າງກ້ວາງຂວາງ.

ບ້ານນາຫອຍປັງ ຕາແສງບ້ານໄຮ່-ນໍ້າຕອນ ເມືອງນາຊາຍທອງມີທີ່ຕັ້ງຍຸດທະສາດສໍາຄັນຢູ່ເຂດລ່ອງສັງ-ລ່ອງຕອນເປັນເຂດຕິດລຽນກັບບັນດາບ້ານ, ເມືອງທີ່ເປັນກໍາແພງອ້ອມຮອບຕົວເມືອງວຽງຈັນ, ໃນຊຸມປີເລີ່ມມີການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ເຂດລ່ອງສັງ-ລ່ອງຕອນ ມີກໍາລັງແນວລາວອິດສະລະ ( ຄະນະກູ້ຊາດ ) ໄດ້ເຄື່ອນໄຫວ ກໍ່ສ້າງເຂດນີ້ໃຫ້ເປັນເຂດທີ່ໝັ້ນ ກອງຫຼອນຕໍ່ຕ້ານທີ່ເຂັ້ມແຂງ ເພື່ອນໍາພາຊຸກຍູ້ຂະບວນການ ຕໍ່ສູ້ຂອງປະຊາຊົນຢູ່ຕົວເມືອງໃຫ້ຂະຫຍາຍຕົວ, ສ້າງເປັນ

ແນວປ້ອງ ກັນຕົວສະກັດກັ້ນການແຜ່ລາມ ອຳນາດຂຸນເສິກ ຂອງສັດຕູ ອອກສູ່ຊົນນະບົດ ແລະປົກປັກຮັກສາເຂດໃຈກາງເມືອງວຽງຈັນ. ບໍລິເວນ ລ່ອງສັງ-ລ່ອງຕອນຈຶ່ງປຽບເໝືອນເປັນເຂດຍາດແຍ່ງ ລະຫວ່າງສອງ ກຳລັງ (ກຳລັງປະຕິວັດ ແລະກຳລັງລ່າເມືອງຂຶ້ນຝຣັ່ງ ພ້ອມລູກແຫຼ່ງຕີນ ມືຂອງພວກເຂົາ)ທັງເປັນບ່ອນສັດຕູເອົາໃຈໃສ່ກວາດລ້າງປາບປາມ, ຂູ່ເຂັນ ປະຊາຊົນຢ່າງໜັກໜ່ວງ. ມາຮອດສະໄໝຕໍ່ສູ້ກູ້ຊາດ ຕ້ານຈັກ ກະພັດອາເມຣິກາ ກໍ່ເຊັ່ນດຽວກັນປະຊາຊົນເຂດນີ້ ລ້ວນແຕ່ຖືກກົດຂີ່ ຂູດຮີດ, ບັງຄັບຂົ່ມເຫັງ ແລະທາລຸນເໝືອນປະຊາຊົນບັນດາເຜົ່າໃນທົ່ວ ປະເທດ ສັດຕູໄດ້ນຳກຳລັງບຸກຕີ, ກວາດລ້າງ ແລະສ້າງຕັ້ງອຳນາດການ ປົກຄອງຫຸ່ນທ້ອງຖິ່ນຂຶ້ນເພື່ອເປັນເຄື່ອງມືໃນການກົດຂີ່ຂູດຮີດປະຊາຊົນ ຢ່າງຕໍ່ເນື່ອງ.

## 2. ຊີວິດເມື່ອໄວເຍົາ:

ໃນທ່າມກາງສະພາບການບ້ານເມືອງທີ່ບໍ່ແນ່ນອນ ແລະບໍ່ໄວ້ ວາງໃຈນັ້ນ ອາດເປັນການໂຊກດີ ຂອງປະຫັວດສາດ ເວລາປະເທດຊາດ ພວມຢູ່ໃນຄວາມສ່ຽງເປັນສ່ຽງຕາຍຢູ່ນັ້ນ ປາກົດມີບັນດາເດັກນ້ອຍເກີດ ໃໝ່ຈາກຄອບຄົວທີ່ຮັກຊາດອອກມາເບິ່ງໂລກ ຊຶ່ງພວມຕົກຢູ່ໃນອຳນາດ ຄອບງຳຂອງພວກລ່າເມືອງຂຶ້ນຝຣັ່ງ ແລະຈັກກະພັດອາເມຣິກາ. ໃນນັ້ນ ມີເດັກຊາຍ ສີທອງ ແຫ່ງບ້ານນາທອຍປັງ ຕາແສງບ້ານໄຮ່ ( ນ້ຳຕອນ ) ເມືອງນາຊາຍທອງ ແຂວງວຽງຈັນ ເຈືອຈານຢູ່ນຳ ພໍ່ຊຽງມີ ( ພໍ່ຫຼີ ) ແລະ ແມ່ໂສພາ ໄດ້ໃຫ້ກຳເນີດສີທອງ ເມື່ອວັນທີ 9 ສິງຫາ 1925. ໃນເວລາ ຕໍ່ມາກໍໃຫ້ກຳເນີດນ້ອງອີກສອງຄົນຄື : ນາງບູນຮອງ ແລະ ທ້າວກອງສີ.

ໃນຊີວິດໄວເດັກສີທອງ ພ້ອມນ້ອງໆໄດ້ຮັບການສຶກສາອົບຮົມ ບົ່ມສອນຈາກພໍ່ແມ່ຍາດພີ່ນ້ອງເພື່ອກາຍເປັນເດັກຄຳຮູ້ຂອງຄອບຄົວ, ເມື່ອກ້າວເຂົ້າສູ່ທ້າຍໄວເດັກສີທອງໄດ້ນຳພານ້ອງໆເຮັດວຽກເຮືອນ

ການຊານຊ່ວຍພໍ່ແມ່ເຊັ່ນ: ຕັກນ້ຳ, ຕຳເຂົ້າ, ເກືອເປັດ, ເກືອໄກ່ ເບິ່ງແຍງງົວຄວາຍ ຫາຫຼົວຫາຟືນ ແຕ່ງຢູ່ຄົວກິນ ແລະອື່ນໆ. ເຖິງລະດູຕົກກ້າ-ດຳນາ ສີທອງກໍ່ແມ່ນກຳລັງແຮງງານສຳຄັນໃນຄອບຄົວຊ່ວຍພໍ່ໄຖນາ, ຄາດນາ ແລະຊ່ວຍພໍ່ແມ່ຫຼົກກ້າ ດຳນາຕາມປະເພນີນິຍົມຂອງຄົນທ້ອງຖິ່ນ. ເມື່ອມີເວລາຫວ່າງ ສີທອງ ຍັງໄດ້ຊອກຮູ້ຮໍ່າຮຽນ, ຮຽນໜັງສືນຳຄູບາອາຈານຢູ່ໃນວັດ ຫຼືນຳຮຸ່ນອ້າຍ-ເອື້ອຍ. ຈົນສາມາດອ່ານໄດ້ຂຽນເປັນ ເນື່ອງຈາກວ່າບໍ່ມີໂອກາດຈະໄດ້ຮໍ່າຮຽນນຳໝູ່ ຍ້ອນຖານະຄອບຄົວທຸກຍາກຂາດເຂີນ ການສົ່ງເສີມ ຂອງພໍ່ແມ່ໃຫ້ລູກໄດ້ຮຽນກໍບໍ່ມີເງື່ອນໄຂອີກດ້ານໜຶ່ງ ໂຮງຮຽນຊ້ຳພັດມີຢູ່ແຕ່ໃນຕົວເມືອງ ສ່ວນບ້ານສອກຫຼີກ ແມ່ນບໍ່ມີໂຮງຮຽນ. ສີທອງເປັນຄົນດຸໝັ່ນຂະຫຍັນພຽນ, ອົດທົນ ແລະຟັງຄຳສັ່ງສອນຂອງຄູບາອາຈານ ທັງເປັນຄົນມັກຊອກສະແຫວງຫາຄວາມຮູ້ດ້ານຕ່າງໆ.

ສີທອງ ເປັນຄົນມີນິໄສສຸຂຸມ ຮູ້ຖະໜອມຖ່ອມຕົວ ມີຄວາມຈິງຈັງຕໍ່ວຽກງານ ເວົ້າໜ້ອຍແຕ່ເຮັດຫຼາຍ ນອກຈາກນີ້ເຂົາຍັງມີມູນ ຂອງການເປັນເພດຊາຍ ທີ່ມີຄວາມມັກມ່ວນຊື່ນລ່າເລີງດັ່ງຄົນໜຸ່ມທີ່ພວມເລີ່ມແຕກເນື້ອໜຸ່ມທົ່ວໆໄປ ເຂົາມັກສັງເກດ, ມັກຟັງ, ມັກຊອກຮູ້ຮໍ່າຮຽນ, ມັກເລົ່າເລື່ອງຕ່າງໆເຊັ່ນ: ມັກເລົ່າເລື່ອງຊວນຫົວໃຫ້ຄົນອື່ນຟັງຈົນແຂ້ວແຫ້ງ, ມັກຊົກມວຍ ແລະທວາຍບັນຫາ. ບາງເທື່ອ ສີທອງ ກໍ່ມີອາລົມເບີກບານເຖິງຂັ້ນຂັບງຶມຜູ້ດຽວ ແລະມີບາງຄັ້ງເຂົາຂັບງຶມຕໍ່ກອນກັບພໍ່ຢູ່ຖຽງນານ້ອຍ. ໝູ່ເພື່ອນຫຼາຍໆຄົນເຄີຍມາຈອບຟັງເຫັນວ່າການເດີນກອນຂອງ ສະຫາຍ ສີທອງ ບໍ່ແມ່ນທຳມະດາ ພໍປານລຸງຈານຊິມ ໝໍຂັບໃຫຍ່ລ່ອງງຶມ ( ບ້ານປາກກະຍຸງ ) ເຂົາມີນ້ຳສຽງດີ ລູກຄໍເອື້ອນຫຼຽນໄຫຼ ຊຸ່ມສຽງທີ່ຂັບອອກໄປເຮັດໃຫ້ຜູ້ຟັງເກີດອາລົມສູນທະລີເບີກບານໃຈໄປນຳເຂົາວາຊັ້ນສາ.

ວັນທີ 09 ພຶດສະພາ 1945 ກອງທັບແດງໂຊວຽດ ໄດ້ຜາບແພ້ກອງທັບຟາດຊິດເຢຍລະມັນ. ສະຫະພາບໂຊວຽດ ໄດ້ປະກາດໄຊຊະນະເໜືອຟາດຊິດໃນສົງຄາມໂລກຄັ້ງທີສອງ ບັນດາປະຊາຊາດ ໃນເອີລົບຕາເວັນອອກ ໄດ້ຮັບການປົດປ່ອຍອອກຈາກແອກກົດຂີ່ ແລະມີຫຼາຍປະ

ເຫດເດີນຕາມເສັ້ນທາງສັງຄົມນິຍົມ. ຕໍ່ມາວັນທີ 15 ສິງຫາ 1945 ພວກຊຸນເສິກຍີ່ປຸ່ນ ໄດ້ປະກາດຍອມຈຳນົນຕໍ່ພັນທະມິດ. ກາລະໂອກາດອຳນວຍສຳລັບການລຸກຮືຂຶ້ນຍຶດອຳນາດຂອງປະຊາຊົນໄດ້ມາຮອດ.

ໃນວັນ ທີ 23 ສິງຫາ 1945 ເປັນວັນຍຶດອຳນາດ ຂອງປະຊາຊົນລາວທົ່ວປະເທດ ແຕ່ຍ້ອນພວກລ່າເມືອງຂຶ້ນຝຣັ່ງ ຍັງມີບົດບາດສຳຄັນໃນກຸ່ມພັນທະມິດ ພວກເຂົາຍັງສືບຕໍ່ດຳເນີນນະໂຍບາຍຂົ່ມເຫັງປາບປາມປະຊາຊົນ ໂດຍສະເພາະແມ່ນກຳລັງຮັກຊາດ ພາຍໃຕ້ການນຳພາຂອງແນວລາວອິດສະລະ. ການຕໍ່ສູ້ດຳເນີນໄປຢູ່ໃນຕົວເມືອງແລະຊົນນະບົດໃນທ່າຖືກກົດໝາຍ ແລະການປິດລ້ອມທາງຍຸດທະສາດຕ່າງໆ ຈຶ່ງເຮັດໃຫ້ພວກລ່າເມືອງຂຶ້ນຝຣັ່ງ ຍອມມອບເອກະລາດ ໃຫ້ແກ່ລາວ ແລະປະກາດ ເອກະລາດ ທີ່ນະຄອນຫຼວງວຽງຈັນ ໃນ ວັນທີ 12 ຕຸລາ 1945.

1945 ເປັນປີທີ່ ສີທອງ ໄດ້ແຕກເນື້ອໜຸ່ມເປັນບ່າວ 20 ປີຢ່າງເຕັມຕົວ ເຂົາເລີ່ມເຂົ້າໃຈສະພາບການບ້ານເມືອງ ເນື່ອງຈາກວ່າພະນັກງານ ກໍ່ສ້າງຮາກຖານການເມືອງ ຂອງແນວລາວອິດສະລະ ມີການເຄື່ອນໄຫວປິດລັບຢູ່ໝູ່ບ້ານແຖບນີ້ ເຂົາເຄີຍໄດ້ຍິນຫູຟັງ ແລະຊອກຮູ້ການເຄື່ອນໄຫວຂອງພະນັກງານຫຼັກແຫຼ່ງ ທີ່ໄດ້ຊີ້ແຈງເຖິງຄວາມໂຫດຮ້າຍປ່າເຖື່ອນ ຂອງພວກລ່າເມືອງຂຶ້ນບວກກັບເຫດການການກະທຳຂອງລູກແຫຼ້ງຕີນມື ທີ່ບັງຄັບຂົ່ມເຫັງປາບປາມ ຜູ້ທີ່ບໍ່ເຫັນດີເຫັນພ້ອມນຳພວກເຂົາຢ່າງປ່າເຖື່ອນ ເຮັດໃຫ້ແນວຄິດຂອງ ສີທອງ ໄດ້ຄ່ອຍໆຮັບຮູ້ທາດແທ້ຂອງບັນຫາ ດັ່ງນັ້ນໜ້າທີ່ສະເພາະໜ້າຂອງປະຊາຊົນລາວບັນດາເຜົ່າ ໂດຍສະເພາະແມ່ນ ເຂດລ່ອງສັງ-ລ່ອງຕອນ ດຳເນີນການຕໍ່ສູ້ດ້ວຍກຳລັງປະກອບອາວຸດຂອງຕົນເອງ ເພື່ອກ້າວເຂົ້າສູ່ສົງຄາມປະຊາຊົນຢ່າງເຕັມຮູບແບບ. ສີທອງ ໄດ້ເອົາຕົນເອງເຈືອຈານຢູ່ໃນຂະບວນການດັ່ງກ່າວ ແລະໄດ້ຮັບໃຊ້ວຽກງານທະຫານລາດກອງຫຼອນ ຕາມການມອບໝາຍຂອງການຈັດຕັ້ງ ເພື່ອຂັບໄລ່ພວກລ່າເມືອງຂຶ້ນຝຣັ່ງອອກຈາກແຜ່ນດິນບ້ານເກີດເມືອງນອນທີ່ຫວງແຫນຂອງຕົນ.

ສະຫາຍສີທອງເຕີບໃຫຍ່ຂຶ້ນໃນທ່າມກາງປະເທດຊາດຕົກເປັນທີ່ວເມືອງຂຶ້ນຂອງຕ່າງດ້າວ ; ແລະທ່າມກາງສະພາບການບ້ານເມືອງມີຄວາມຮ້ອນຮົນ ພວກລ່າເມືອງຂຶ້ນຊ່ວງຊີງກັນ ຊອກລ່າຫາທີ່ວເມືອງຂຶ້ນ. ຂະບວນການຕໍ່ສູ້ປະຕິວັດຂອງປະຊາຊົນໄດ້ຟົດເດືອດຂຶ້ນຢູ່ຕາມຕົວເມືອງຊົນນະບົດ ເພື່ອທວງເອົາສິດເສລີພາບ, ສິດເປັນເຈົ້າຂອງປະເທດຊາດຢູ່ທຸກແຫ່ງຫົນປະຊາຊົນເວລານັ້ນ ໄດ້ຖືກກົດຂີ່ຂູດຮີດຢ່າງໜັກໜ່ວງເຊັ່ນ: ຖືກເກັບເກນໄປເປັນກູລີ, ສ້າງຖະໜົນຫົນທາງ ແບກຫາບຂົນສົ່ງ, ສ້າງປົດຄ້າຍ ແລະເປັນທະຫານ, ບໍ່ພຽງແຕ່ເທົ່ານັ້ນປະຊາຊົນລາວຍັງຖືກຂົ່ມເຫັງ ຖືກກອບໂກຍເອົາຊັບສິນບັດອັນລ້ຳຄ່າ, ຖືກປຸ້ນສະດົມເອົາສະບຽງອາຫານ ແລະອື່ນໆ ແປວໄຟແຫ່ງຄວາມຄຽດແຄ້ນສັດຕູຂອງປະຊາຊົນນັບມື້ນັບເພີ່ມທະວີສູງຂຶ້ນຂະບວນການ ຕໍ່ສູ້ໄດ້ແຜ່ລາມແຕ່ຕົວເມືອງໄປເຖິງຊົນນະບົດຢ່າງເປັນຂະບວນການ ແລະຕໍ່ເນື່ອງ.

ຍ່າງກ້າວເຂົ້າຊີວິດໄວໜຸ່ມ ສີທອງ ໄດ້ເຫັນສະພາບການບ້ານເກີດເມືອງນອນຖືກສັດຕູຈູດເລົ້າເຂົ້າເຜົາຜານເຮືອນຊານ, ບັງຄັບຂົ່ມເຫັງເອົາປຽບປະຊາຊົນ ແລະທຸບຕີປະຊາຊົນຢ່າງບໍ່ມີມະນຸດສະທຳ ໄດ້ສ້າງໃຫ້ປະຊາຊົນລາວ ກໍຄືຊາວລ່ອງສັງ-ລ່ອງຕອນ ຈົມຢູ່ກັບຄວາມທຸກທໍລະມານ ສິ່ງສຳຄັນທີ່ສຸດແມ່ນໄດ້ເຫັນພຶດຕິກຳ ແລະການກະທຳທີ່ໂຫດຮ້າຍຂອງພວກລ່າຂຶ້ນຝຣັ່ງທີ່ມີຕໍ່ປະຊາຊົນ ແລະຍາດຕິພີ່ນ້ອງໂດຍສະເພາະແມ່ນໃນລະຫວ່າງຕົ້ນປີ 1946 ຫຼັງຈາກການກັບມາຮຸກຮານຂອງພວກລ່າເມືອງຂຶ້ນຝຣັ່ງຄັ້ງທີສອງ. ໃນເວລານັ້ນ ສະຫາຍ ມີອາຍຸພຽງ 21 ປີ ສີທອງ ແລະຊາວບ້ານຈຳນວນໜຶ່ງ ໄດ້ຖືກເກັບເກນໄປເປັນກູລີສ້າງທາງ, ສ້າງປົດຄ້າຍຢູ່ເຂດບ້ານເພຍລາດ ໃນນັ້ນມີພໍ່ ສະຫາຍ ສີທອງລວມຢູ່ນຳ ເພິ່ນຖືກທຸບຕີທໍລະມານ ຈົນເຈັບປວດຢ່າງແສນສາຫັດ.

ຕໍ່ມາຍ້ອນທົນຕໍ່ພິດບາດແຜ ຈາກນ້ຳມື ຂອງພວກລ່າເມືອງຂຶ້ນຝຣັ່ງບໍ່ໄດ້ອີກດ້ານໜຶ່ງອາຍຸກະສຽນຂອງພໍ່ກໍແກ່ແລ້ວເພິ່ນຈຶ່ງລົ້ມປ່ວຍໜັກ ແລະສິ້ນລົມຫາຍໃຈ ໃນທ່າມກາງສຽງຮ້ອງໄຫ້ອາໄລອາວອນຂອງແມ່ ລູກໆ ແລະຊາວບ້ານ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ